ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------

**ກະຊວງການເງິນ**

**ກົມພາສີ** ເລກທີ 1456 /ກພສ

ນະຄອນຫລວງວຽງຈັນ, ວັນທີ 26 ພຶດສະພາ 2009

# ບົດແນະນຳ

# ວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງ, ການສົ່ງຄືນເງິນຄ້ຳປະກັນ ຄ່າພາສີ ແລະ ພັນທະອື່ນໆ ສຳລັບສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າຊົ່ວຄາວ

*************

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20/05/2005.
- ອີງຕາມ ດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19/10/2007 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍພາສີ.
- ອີງຕາມ ຄຳແນະນຳ ຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 0153/ກງ, ລົງວັນທີ 29/01/2009 ວ່າດ້ວຍການຄຸ້ມຄອງ, ການສົ່ງຄືນເງິນຄ້ຳປະກັນຄ່າພາສີ ແລະ ພັນທະອື່ນໆ ສຳລັບສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າຊົ່ວຄາວ.
- ອີງຕາມ ການຄົ້ນຄ້ວາເຫັນດີເປັນເອກະພາບຂອງຄະນະກົມພາສີ

ຫົວໜ້າກົມພາສີ ອອກບົດແນະນຳ :

<u>ມາດຕາ</u> 1. ຈຸດປະສົງ

ບົດແນະນຳສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ເພື່ອຈັດຕັ້ງປະຕິບັດ ຄຳແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 0153/ກງ, ລົງວັນທີ 29/01/2009 ວ່າດ້ວຍການຄຸ້ມຄອງ, ການສົ່ງຄືນເງິນຄ້ຳປະກັນພາສີ ແລະ ພັນທະອື່ນໆ ສຳລັບການນຳເຂົ້າຊົ່ວຄາວ ເພື່ອແນໃສ່ຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດ, ການຄຸ້ມຄອງ, ການໄລ່ລຽງສົ່ງຄືນເງິນ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ມີຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ.

<u>ມາດຕາ</u> 2. ການຄຸ້ມຄອງບັນຊີເງິນຝາກ.

ການຄຸ້ມຄອງບັນຊີເງິນຝາກທີ່ກຳນົດໄວ້ໃນມາດຕາ 2 ຂອງຄຳແນະນຳລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 0153/ກງ, ລົງວັນທີ 29/01/2009. ພະແນກຈັດຕັ້ງ,

ບໍລິຫານ ແລະ ສູນຝຶກ ໄດ້ເປີດບັນຊີສະເພາະຂອງກົມພາສີ ຢູ່ທະນາຄານພັດທະນາລາວ, ໝາຍ ເລກບັນຊີດຽວໃນທົ່ວປະເທດ ຄື: 0320-00-2121300-01000012.

<u>ມາດຕາ</u> 3. ການຄຸ້ມຄອງເງິນຄໍ້າປະກັນ

ການຄຸ້ມຄອງເງິນຄໍ້າປະກັນ ຕາມທີ່ກໍານົດໄວ້ໃນມາດຕາ 11 ແລະ 12 ຂອງດໍາລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19/10/2007 ແລະ ມາດຕາ 3 ຂອງຄໍາແນະນໍາ ລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 0153/ກງ, ລົງວັນທີ 29/01/2009 ຕ້ອງປະຕິບັດຕາມລະບຽບການ ດັ່ງລຸ່ມນີ້ :

ກ. <u>ລະບຽບການຕິດຕາມການຮັບ, ການໄລ່ລຽງ, ການສົ່ງຄືນ ແລະ ການສະຫຼຸບບັນຊີ</u>:

1. ໜ້າທີ່ຂອງພະແນກຄຸ້ມຄອງ ການສົ່ງອອກ-ນໍາເຂົ້າ:
   - ມີໜ້າທີ່, ຄຸ້ມຄອງ, ຕິດຕາມບັນຊີເງິນຝາກຕາມທີ່ກໍານົດໄວ້ໃນຂໍ້ໜຶ່ງເທິງນີ້ ໂດຍໃຫ້ມີບັນຊີຕິດຕາມການມອບ-ຖອນເງິນໃນບັນຊີ, ການສົ່ງຄືນໃຫ້ຜູ້ນໍາເຂົ້າ ແລະ ສະຫລຸບການເຄື່ອນໄຫວບັນຊີປະຈໍາວັນ, ອາທິດ, ເດືອນ, ງວດ, ປີ ແລະ ສົມທຽບກັບບັນຊີຕິດຕາມຂອງທະນາຄານ.
   - ອອກໃບສັ່ງມອບເງິນຄໍ້າປະກັນຄ່າພາສີ ແລະ ພັນທະອື່ນໆ ໃຫ້ແກ່ຜູ້ນໍາເຂົ້າ.
   - ຄົ້ນຄ້ວາພິຈາລະນາຄໍາສະເໜີຂໍຖອນເງິນຄໍ້າປະກັນຂອງຜູ້ນໍາເຂົ້າ-ສົ່ງອອກ.
   - ອອກໃບຂໍຖອນເງິນຄໍ້າປະກັນຈາກບັນຊີເງິນຝາກ.
   - ສະສາງບັນຊີ ພາຍຫລັງສິ້ນສຸດສັນຍາຄໍ້າປະກັນ.
   - ສະສາງເງິນຄ່າປັບໃໝ ຕາມລະບຽບການ.
   - ນໍາສະເໜີຄະນະກົມພາສີເພື່ອອະນຸມັດ ສັ່ງມອບເງິນຄໍ້າປະກັນ ແລະ ຄ່າປັບໃໝເຂົ້າງົບປະມານ ຕາມລະບຽບການ ກ່ຽວກັບສັນຍາຄໍ້າປະກັນ.
2. ໜ້າທີ່ຂອງດ່ານພາສີບ່ອນນໍາເຂົ້າ-ສົ່ງອອກ:
   - ເຈົ້າໜ້າທີ່ພາສີປະຈໍາດ່ານ ຕ້ອງໄດ້ກວດກາກ່ຽວກັບບັນດາເອກະສານ ແລະ ສິນຄ້າ, ເຄື່ອງຂອງ ທີ່ສົ່ງອອກ ພ້ອມທັງຢັ້ງຢືນຜົນການກວດກາລົງໃນໃບແຈ້ງພາສີເປັນລາຍລະອຽດ (ບ35).
   - ໄລ່ລຽງເງິນຄໍ້າປະກັນເພື່ອສະສາງການຄໍ້າປະກັນ ໃນກໍລະນີຜູ້ນໍາເຂົ້າຈະນໍາໃຊ້ເຂົ້າໃນໂຄງການໃໝ່ ທີ່ມີສັນຍາກັບລັດຖະບານ.
   - ສົ່ງສໍານວນໃບແຈ້ງພາສີເປັນລາຍລະອຽດ (ບ35) ພ້ອມທັງເອກະສານປະກອບ ໃຫ້ດ່ານນໍາເຂົ້າເບື້ອງຕົ້ນ ພາຍໃນກໍານົດເຈັດວັນ.
   - ແນະນໍາໃຫ້ຜູ້ນໍາເຂົ້າ-ສົ່ງອອກ ປະກອບເອກະສານສະເໜີເຖິງກົມພາສີ ເພື່ອຖອນຄືນເງິນຄໍ້າປະກັນ

ຂ. <u>ໜ້າທີ່ຂອງຜູ້ນຳເຂົ້າ-ສົ່ງອອກ</u>:

1. ການເຮັດສັນຍາວາງເງິນຄ້ຳປະກັນ.

1.1 ເມື່ອຄົບກຳນົດເວລາທີ່ລັດຖະການພາສີ ອະນຸຍາດໃຫ້ນຳເຂົ້າຊົ່ວຄາວຕາມທີ່ກຳນົດໄວ້ໃນມາດຕາ 11 ແລະ 12 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19/10/2007 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍພາສີ ຊຶ່ງໄດ້ເຮັດສັນຍາຄ້ຳປະກັນເບື້ອງຕົ້ນກັບດ່ານພາສີບ່ອນນຳເຂົ້າ ໂດຍບໍ່ໄດ້ວາງເງິນຄ້ຳປະກັນ, ແຕ່ບໍ່ສາມາດສົ່ງອອກໄດ້ຕາມກຳນົດເວລາເຊັ່ນ: ການນຳເອົາວັດຖຸດິບເຂົ້າມາຜະລິດ ເພື່ອສົ່ງອອກ (ຫົກເດືອນ), ການນຳເອົາວັດຖຸສິ່ງຂອງເຂົ້າມາປະກອບເປັນຜະລິດຕະພັນເພື່ອສົ່ງອອກ (ຫົກສິບວັນ), ການນຳເອົາວັດຖຸສິ່ງຂອງເຂົ້າມາເພື່ອດັດແປງ ຫຼື ສ້ອມແປງແລ້ວນຳອອກຄືນ (ສີ່ສິບຫ້າວັນ), ການນຳເຂົ້າກົນຈັກໜັກ (ສອງປີ). ຜູ້ນຳເຂົ້າຕ້ອງໄດ້ມາແຈ້ງຕໍ່ລັດຖະການພາສີ ຢູ່ພະແນກຄຸ້ມຄອງການສົ່ງອອກ-ນຳເຂົ້າ ເພື່ອເຮັດສັນຍາວາງເງິນຄ້ຳປະກັນ ຕາມຈຳນວນເງິນທີ່ໄດ້ຄິດໄລ່ໄວ້ໃນໃບແຈ້ງພາສີເປັນລາຍລະອຽດ (ບ50) ສະເພາະການນຳເຂົ້າຕາມມາດຕາ 12 ຈະໄດ້ຄິດໄລ່ອັດຕາສ່ວນຫຼຸດຕາມຕາຕະລາງ (ກ).

1.2 ຜູ້ນຳເຂົ້າ ໄປມອບເງິນເຂົ້າບັນຊີເງິນຝາກສະເພາະຂອງກົມພາສີ ຢູ່ທະນາຄານຕາມຈຳນວນເງິນຄ່າພາສີ ແລະ ພັນທະອື່ນໆ ທີ່ຄິດໄລ່ໄວ້ໃນໃບແຈ້ງພາສີເປັນລາຍລະອຽດໃນການນຳເຂົ້າເບື້ອງຕົ້ນ ແລະ ລະບຸໄວ້ໃນສັນຍາວາງເງິນຄ້ຳປະກັນທີ່ໄດ້ເຮັດກັບພະແນກຄຸ້ມຄອງການສົ່ງອອກ-ນຳເຂົ້າ ໃຫ້ຄົບຖ້ວນ.

1.3 ຜູ້ນຳເຂົ້າ ນຳເອົາໃບຮັບເງິນຄ້ຳປະກັນທີ່ທະນາຄານອອກໃຫ້ມາແຈ້ງຕໍ່ພະແນກຄຸ້ມຄອງການສົ່ງອອກ-ນຳເຂົ້າເພື່ອລົງບັນຊີຕິດຕາມ. ຫລັງຈາກນັ້ນຜູ້ນຳເຂົ້ານຳເອົາໃບແຈ້ງພາສີເປັນລາຍລະອຽດ ພ້ອມທັງເອກະສານປະກອບ ແລະ ໃບຮັບເງິນຄ້ຳປະກັນໄປ ແຈ້ງຕໍ່ອາຍຸສັນຍາຄ້ຳປະກັນການນຳເຂົ້າຊົ່ວຄາວ ຢູ່ດ່ານພາສີບ່ອນນຳເຂົ້າສິນຄ້າ, ເຄື່ອງຂອງ.

2. ການສົ່ງອອກຄືນ

2.1 ປະກອບໃບແຈ້ງພາສີເປັນລາຍລະອຽດ (ບ35) ເພື່ອຍື່ນຕໍ່ດ່ານພາສີ ນຳເຂົ້າເບື້ອງຕົ້ນ ຫຼື ດ່ານພາສີແຫ່ງອື່ນ ທີ່ຈະສົ່ງອອກແຕ່ຕ້ອງໄດ້ຮັບອະນຸຍາດຈາກກົມພາສີ.

2.2 ເຮັດໃບສະເໜີເຖິງດ່ານພາສີບ່ອນນຳເຂົ້າ ເພື່ອຂໍຖອນຄືນເງິນຄ້ຳປະກັນ, ເງິນຄ່າພາສີ ແລະ ພັນທະອື່ນໆ ພາຍໃນກຳນົດເວລາຊາວເອັດວັນ ຫຼັງຈາກສິນຄ້າ, ເຄື່ອງຂອງໄດ້ຖືກສົ່ງອອກຄືນແລ້ວ, ຄັດຕິດໃບສະເໜີດັ່ງກ່າວຕ້ອງປະກອບດ້ວຍບັນດາເອກະສານຕ່າງໆ ກ່ຽວກັບການສົ່ງອອກ-ນຳເຂົ້າ ຊຶ່ງເປັນສະບັບເດີມເຊັ່ນ: ສັນຍາຄ້ຳປະກັນ, (ບ50), (ບ35), (ບ52A-B) ໃບຮັບເງິນຄ້ຳປະກັນ ແລະ ອື່ນໆ......

2.3 ວາງເງິນຄ້ຳປະກັນຕາມການໄລ່ລຽງຂອງລັດຖະການພາສີ ໃນກໍລະນີຈະນຳໃຊ້ເຂົ້າໃນໂຄງການໃໝ່ ທີ່ມີສັນຍາກັບລັດຖະບານ.

2.4 ຊຳລະຄ່າພາສີ ແລະ ພັນທະອື່ນໆ ຕາມການໄລ່ລຽງຂອງລັດຖະການພາສີ ສຳລັບການນຳເຂົ້າຊົ່ວຄາວ ຕາມມາດຕາ 13 ຂອງດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19/10/2007 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍພາສີ.

2.5 ສົມຍອມ ແລະ ປະຕິບັດຕາມມາດຕະການ ທີ່ກຳນົດໄວ້ໃນລະບຽບກົດໝາຍ.

ຄ. ຕົວຢ່າງ:

1. ການຄ້ຳປະກັນ ການນຳເອົາວັດຖຸ, ສິ່ງຂອງ ເຂົ້າມາຜະລິດເພື່ອສົ່ງອອກ :

ຜູ້ນຳເຂົ້າ ໄດ້ແຈ້ງພາສີເປັນລາຍລະອຽດ ນຳເຂົ້າວັດຖຸດິບມາຜະລິດເພື່ອສົ່ງອອກ ໃນວັນທີ 01/01/2009 ມູນຄ່າ 200,000,000 ກີບ, ຄ່າພາສີ ແລະ ພັນທະອື່ນໆ ເທົ່າກັບ 42,000,000 ກີບ. ໃນເມື່ອຄົບກຳນົດຫົກເດືອນ ຜູ້ນຳເຂົ້າບໍ່ສາມາດສົ່ງອອກຜະລິດຕະພັນໄດ້ ຜູ້ນຳເຂົ້າຈຶ່ງໄດ້ມາຂໍຕໍ່ອາຍຸສັນຍາຄ້ຳປະກັນ ໃນວັນທີ 01/07/2009. ເມື່ອຕົກມາເຖິງວັນທີ 01/11/2009 ຜູ້ນຳເຂົ້າໄດ້ແຈ້ງສົ່ງອອກ ຜະລິດຕະພັນຈຳນວນໜຶ່ງ ມູນຄ່າ 100,000,000 ກີບ (ມູນຄ່າການນຳເຂົ້າວັດຖຸເບື້ອງຕົ້ນ)ສ່ວນທີ່ເຫລືອແມ່ນເອົາໄປຂາຍຢູ່ໃນປະເທດ *ຕ້ອງປະຕິບັດດັ່ງນີ້:*

1.1 ການນຳເຂົ້າຊົ່ວຄາວໃນເບື້ອງຕົ້ນ ນັບແຕ່ວັນທີ 01/01/2009 ຫາວັນທີ 30/06/2009 ບໍ່ໄດ້ວາງເງິນຄ້ຳປະກັນ, ແຕ່ຕ້ອງໄດ້ເຮັດສັນຍາຄ້ຳປະກັນ ຈະສົ່ງອອກຜະລິດຕະພັນໃນໄລຍະດັ່ງກ່າວພາຍໃນກຳນົດ ຫົກເດືອນ (ເຮັດສັນຍາຢູ່ດ່ານນຳເຂົ້າ).

1.2 ຜູ້ນຳເຂົ້າ ໄດ້ມາແຈ້ງຂໍຕໍ່ອາຍຸສັນຍາຄ້ຳປະກັນ ວັນທີ 01/07/2009 ເນື່ອງຈາກບໍ່ສາມາດສົ່ງອອກຜະລິດຕະພັນໃນໄລຍະຫົກເດືອນ ຕາມສັນຍາໃນເບື້ອງຕົ້ນ (ຂໍ້ 1.1), ຜູ້ນຳເຂົ້າຕ້ອງເຮັດສັນຍາ ແລະ ວາງເງິນຄ້ຳປະກັນເທົ່າກັບຈຳນວນຄ່າພາສີ ແລະ ພັນທະອື່ນໆ ທີ່ໄດ້ຄິດໄລ່ໄວ້ໃນໃບແຈ້ງພາສີເປັນລາຍລະອຽດຂອງການນຳເຂົ້າເບື້ອງຕົ້ນ (ບ50) 42.000.000 ກີບ ໂດຍມອບເຂົ້າບັນຊີເງິນຝາກຂອງກົມພາສີ ຕາມລະບຽບທີ່ ກຳນົດໄວ້ໃນຂໍ້ທີ 1, ມາດຕາ 11 ຂອງດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19/10/ 2007 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ.

1.3 ຜູ້ນຳເຂົ້າໄດ້ແຈ້ງສົ່ງອອກຜະລິດຕະພັນ ໃນວັນທີ 01/11/2009 ມູນຄ່າ 100.000.000 ກີບ ແລະ ໄດ້ຂາຍຢູ່ພາຍໃນມູນຄ່າ 100.000.000 ກີບ.

+ ມູນຄ່າທີ່ຈະຖືກໄລ່ລຽງສົ່ງຄືນ: (100.000.000 x 100) ÷ 200.000.000 = 50% (ອັດຕາສ່ວນທີ່ຈະສົ່ງຄືນ), ສະນັ້ນຈຳນວນເງິນທີ່ຈະຖືກສົ່ງຄືນແມ່ນ: 42.000.000 x 50% = 21.000.000 ກີບ (ຖອນຈາກບັນຊີເງິນຝາກຂອງ ກົມພາສີ).

+ ຜະລິດຕະພັນທີ່ໄດ້ຂາຍຢູ່ພາຍໃນປະເທດ ມີມູນຄ່າ = 100.000.000 ກີບ (ມູນຄ່າການນຳເຂົ້າວັດຖຸເບື້ອງຕົ້ນ) ຈະຕ້ອງຖືກເສຍພາສີ ແລະ ພັນທະອື່ນໆ ຈຳນວນ 21.000.000 ກີບ.

+ ຜູ້ນຳເຂົ້າມາແຈ້ງຊັກຊ້າ ແລະ ບໍ່ໄດ້ແຈ້ງໃຫ້ລັດຖະການພາສີຊາບລ່ວງໜ້າໃນການຂາຍຢູ່ພາຍໃນປະເທດ (ຕ້ອງແຈ້ງສົ່ງອອກຄືນ ຫຼື ແຈ້ງໃນການຂາຍພາຍໃນບໍ່ກາຍວັນທີ 30/09/2009) ແຕ່ໄດ້ມາແຈ້ງໃນວັນທີ 01/11/2009 (30/09/2009 ຫາ 01/11/2009 = 30 ວັນ) ຈະຖືກປັບໃໝຄື:

- ການສົ່ງອອກຄືນຈະຖືກປັບໃໝ: (21.000.000 x 0.01%) x 30 ວັນ = 63.000 ກີບ.

- ການຂາຍຢູ່ພາຍໃນຈະຖືກປັບໃໝໃນການມາແຈ້ງຊັກຊ້າ ຄື:

  (21.000.000 x 0.01%) x 30 ວັນ = 63.000 ກີບ ແລະ ຈະຖືກປັບໃໝຕາມມາດຕາ 52 : 21.000.000 x 1 ເທົ່າ = 21.000.000 ກີບ, ລວມຄ່າປັບໃໝ: 63.000 + 21.000.000 = 21.063.000 ກີບ.

- ລວມຄ່າປັບໃຫມທັງຫມົດ (ທັງສອງກໍລະນີ) :

  63.000 + 21.063.000 = 21.126.000 ກີບ.

- ລວມມູນຄ່າພາສີ ແລະ ພັນທະອື່ນໆ + ຄ່າປັບໃໝ :

  21.000.000 + 21.126.000 = 42.126.000 ກີບ.

- ສະຫລຸບໄດ້ວ່າຜູ້ນຳເຂົ້າຕ້ອງໄດ້ຖອກເງິນເພີ້ມຕື່ມໃສ່ເງິນທີ່ໄດ້ຄ້ຳປະກັນໄວ້

  42.126.000 - 42.000.000 = 126.000 ກີບ

2. ການຄ້ຳປະກັນໃນການນຳເຂົ້າຊົ່ວຄາວສຳຫລັບກົນຈັກໜັກ.

ຜູ້ນຳເຂົ້າ ໄດ້ແຈ້ງພາສີເປັນລາຍລະອຽດ ນຳເຂົ້າກົນຈັກໜັກ (ລົດຍົກ) ໃນວັນທີ 01/01/2009 ມູນຄ່າ 500,000,000 ກີບ (ລາຄາຊື້ຂາຍຕົວຈິງ) ຄ່າພາສີ ແລະ ພັນທະອື່ນໆ 105,000,000 ກີບ. ໃນເມື່ອຄົບກຳນົດຕາມສັນຍາ ຜູ້ນຳເຂົ້າບໍ່ມາຂໍຕໍ່ອາຍຸສັນຍາຄ້ຳປະກັນຕາມກຳນົດເວລາ ແລະ ມາແຈ້ງໃນວັນທີ 01/03/2011 ຜູ້ນຳເຂົ້າ ຈຶ່ງໄດ້ມາຂໍຕໍ່ອາຍຸສັນຍາຄ້ຳປະກັນ ຊຶ່ງຜູ້ນຳເຂົ້າໄດ້ຮັບໂຄງການໃໝ່ທີ່ມີສັນຍາກັບລັດຖະບານ ຢາກໂອນກົນຈັກໜັກດັ່ງກ່າວໄປຮັບໃຊ້ໂຄງການໃໝ່ ໂດຍເຮັດໃບສະເໜີເປັນລາຍລັກອັກສອນຕໍ່ລັດຖະການພາສີ ພິຈາລະນາການໄລ່ລຽງອັດຕາສ່ວນຫລຸດເພື່ອວາງເງິນຄ້ຳປະກັນ ແລະ ສົ່ງຄືນເງິນຄ້ຳປະກັນ *ຕ້ອງປະຕິບັດດັ່ງນີ້:*

2.1 ການນຳເຂົ້າຊົ່ວຄາວ ນັບແຕ່ວັນທີ 01/01/2009 ຫາ ວັນທີ 30/12/2010 ບໍ່ໄດ້ວາງເງິນຄ້ຳປະກັນ, ແຕ່ຕ້ອງໄດ້ເຮັດສັນຍາຄ້ຳປະກັນ (ຈະສົ່ງອອກກົນຈັກໜັກໃນໄລຍະດັ່ງກ່າວ ພາຍໃນກຳນົດສອງປີ).

2.2 ຜູ້ນຳເຂົ້າໄດ້ມາແຈ້ງຂໍຕໍ່ອາຍຸສັນຍາຄ້ຳປະກັນ ວັນທີ 01/03/2011 ເນື່ອງຈາກວ່າ ຜູ້ນຳເຂົ້າໄດ້ຮັບໂຄງການໃໝ່ທີ່ມີສັນຍາກັບລັດຖະບານ ຊຶ່ງຜູ້ນຳເຂົ້າຢາກໂອນກົນຈັກໜັກຈາກໂຄງການເກົ່າໄປຮັບໃຊ້ໂຄງການໃໝ່ອີກໃນໄລຍະສິບແປດເດືອນ ໂດຍບໍ່ສົ່ງອອກຄືນ ກົນຈັກໜັກ ຕາມສັນຍາໃນເບື້ອງຕົ້ນ, ຜູ້ນຳເຂົ້າຕ້ອງໄດ້ຄ້ຳປະກັນ ໂດຍຈະໄດ້ຮັບການຫັກສ່ວນຫລຸດ 15% (ຕາມຕາຕະລາງ ກ) ຈຳນວນ: 105.000.000 - (105.000.000 x 15%) = 89.250.000 ກີບ (ມອບເຂົ້າບັນຊີເງິນຝາກຂອງກົມພາສີຢູ່ທະນາຄານ).

2.3 ຜູ້ນຳເຂົ້າມາແຈ້ງຂໍຕໍ່ອາຍຸຂອງສັນຍາຊັກຊ້າ ຫົກສິບວັນ (ຄິດໄລ່ແຕ່ວັນທີ 01/01/2011 ຫາ 01/03/2011 ຈະຖືກປັບໃໝ: ( 105.000.000 x 0.01% ) x 60 ວັນ = 630.000 ກີບ (ມອບເຂົ້າງົບປະມານຕາມລະບຽບການ), ເສຍຄ່າປັບໃໝ ຕາມມາດຕາ 51 ຂອງກົດໝາຍວ່າດ້ວຍພາສີ ແລະ ມາດຕາ 19 (ຂໍ້ 2) ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19/10/2007 ໃນຖານບໍ່ສົ່ງອອກຄືນ (400.000 ກີບ), ລວມກັບເງິນຄ້ຳປະກັນຕົກເປັນເງິນທັງໝົດ: 89.250.000 + 630.000 + 400.000 = 90.280.000 ກີບ.

2.4 ໃນກໍລະນີຜູ້ນຳເຂົ້າໄດ້ແຈ້ງສົ່ງອອກຄືນກົນຈັກໜັກ ຕາມອາຍຸຂອງສັນຍາຄ້ຳປະກັນ (ໃນວັນທີ 01/09/2012) ຕ້ອງປະຕິບັດຄື:

+ໄລ່ລຽງສົ່ງຄືນເງິນຄ້ຳປະກັນ ຕາມການໄລ່ລຽງສົ່ງຄືນເງິນຄ້ຳປະກັນ ໃນເວລານຳອອກ (ຕາຕະລາງ ຂ): 89.250.000 x 65% = 58.012.500 ກີບ (ຖອນຈາກບັນຊີເງິນຝາກຂອງກົມພາສີຢູ່ທະນາຄານ ).

+ ມອບເງິນຄ້ຳປະກັນຄ່າພາສີ ແລະ ພັນທະອື່ນໆ ເຂົ້າງົບປະມານ: 89.250.000 - 58.012.500 = 31.237.500 ກີບ.

2.5 ໃນກໍລະນີຜູ້ນຳເຂົ້າບໍ່ໄດ້ແຈ້ງສົ່ງອອກຄືນກົນຈັກໜັກ ຕາມອາຍຸຂອງສັນຍາຄ້ຳປະກັນ ໄດ້ນຳເອົາໄປຂາຍ ຫລື ປຸ່ງນກຳມະສິດ ຕ້ອງຖືກປະຕິບັດມາດຕະການ ດັ່ງນີ້ :

+ ເສຍພາສີ ແລະ ພັນທະອື່ນໆ ຕາມລະບຽບການ: 31.237.500 ກີບ.

+ ເສຍຄ່າປັບໃໝຕາມມາດຕາ 52 : 31.237.500 x 1 ເທົ່າ = 31.237.500 ກີບ.

+ ລວມເສຍຄ່າພາສີ + ຄ່າປັບໃໝ: 31.237.500 + 31.237.50 = 62.475.000 ກີບ.

- ສະຫລຸບໄດ້ວ່າ ຜູ້ນຳເຂົ້າຈະໄດ້ຮັບເງິນຄ້ຳປະກັນຄືນຈາກລັດຖະການພາສີ :

89.250.000 - 62.475.000 = 26.775.000 ກີບ.

3. ການຄ້ຳປະກັນໃນການນຳເຂົ້າຊົ່ວຄາວພາຫະນະທີ່ມີບ່ອນນັ່ງແຕ່ 30 ບ່ອນນັ່ງລົງມາ.

ຜູ້ນຳເຂົ້າ ໄດ້ແຈ້ງພາສີເປັນລາຍລະອຽດ ນຳເຂົ້າລົດກະບະ 4 ປະຕູ 02 ຄັນ ໃນວັນທີ 01/01/2009 ມູນຄ່າຄັນທີ່ໜຶ່ງ 260,000,000 ກີບ (ເປັນລົດໃໝ່ 100%), ຄ່າພາສີ ແລະ ພັນທະອື່ນໆ 156.000.000 ກີບ, ຄັນທີ່ສອງ ມູນຄ່າ 208.000.000 ກີບ (ເປັນລົດໃຊ້ແລ້ວ) ຄ່າພາສີ ແລະ ພັນທະອື່ນໆ 124,800,000 ກີບ. ໃນເມື່ອຄົບກຳນົດຕາມສັນຍາ ຜູ້ນຳເຂົ້າໄດ້ມາແຈ້ງສົ່ງອອກຄືນພາຫະນະດັ່ງກ່າວ (ຄັນທີໜຶ່ງ), ສ່ວນຄັນທີສອງໄດ້ຂາຍຢູ່ພາຍໃນປະເທດ ໂດຍບໍ່ແຈ້ງໃຫ້ລັດຖະການພາສີ ຊາບລ່ວງໜ້າ, ຕໍ່ບັນຫາດັ່ງກ່າວ *ຕ້ອງປະຕິບັດດັ່ງນີ້:*

3.1 ກໍລະນີແຈ້ງອອກຄືນ (ລົດຄັນທີໜຶ່ງ) ຈະຖືກໄລ່ລຽງສົ່ງຄືນເງິນຄ່າພາສີ ແລະ ພັນທະອື່ນໆ : 156.000.000 x 70% = 109.200.000 ກີບ.

3.2 ກໍລະນີລັກຂາຍ (ລົດຄັນທີສອງ) ຢູ່ພາຍໃນປະເທດ ຈະບໍ່ຖືກໄລ່ລຽງສົ່ງຄືນເງິນຄ່າພາສີ ແລະ ພັນທະອື່ນໆ. ຈະຖືກປັບໃໝ 1 ເທົ່າ ຂອງຄ່າພາສີ ແລະ ພັນທະອື່ນໆ ຕາມການແຈ້ງພາສີເປັນລາຍລະອຽດໃນການນຳເຂົ້າເບື້ອງຕົ້ນ ໃນຖານລະເມີດສັນຍາຄ້ຳປະກັນການນຳເຂົ້າຊົ່ວຄາວ: 124.800.000 x 1 ເທົ່າ = 124.800.000 ກີບ (ຕ້ອງມອບເຂົ້າງົບປະມານຕາມລະບຽບ). ລວມຄ່າພາສີ ແລະ ພັນທະອື່ນໆ + ຄ່າປັບໃໝ = 124.800.000 + 124.800.000 = 249. 600.000 ກີບ.

<u>ມາດຕາ</u> 4. ການຄຸ້ມຄອງເງິນຄ່າພາສີ ແລະ ພັນທະອື່ນໆ

- ການນຳເຂົ້າຊົ່ວຄາວພາຫະນະທີ່ມີບ່ອນນັ່ງແຕ່ 30 ບ່ອນນັ່ງລົງມາ ຕາມກຳນົດໄວ້ໃນມາດຕາ 13 ຂອງດຳລັດ ນາຍົກລັດຖະມົນຕີສະບັບເລກທີ 362/ນຍ, ລົງວັນທີ 19/10/2007 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ແມ່ນການນຳເຂົ້າພາຫະນະຮັບໃຊ້ການຜະລິດທາງອ້ອມ ຫລື ຮັບໃຊ້ບໍລິຫານ ຂອງບັນດາບໍລິສັດທີ່ໄດ້ຮັບໂຄງການປະມູນສາກົນ ໃນບ້ວງເງິນຊ່ວຍເຫລືອ, ກູ້ຢືມ ຫລື ບໍລິສັດຂອງຕ່າງປະເທດ ທີ່ມີສັນຍາກັບລັດຖະບານ ສປປ ລາວ ໃນການສຳປະທານ, ສຳຫລວດ, ອອກແບບ, ກໍ່ສ້າງ ຫລື ພັດທະນາ ໂຄງການຕ່າງໆ.

- ພາຫະນະທີ່ມີບ່ອນນັ່ງແຕ່ 30 ບ່ອນນັ່ງລົງມາ ປະກອບດ້ວຍ: ລົດເກັງ, ລົດຈິບ, ລົດກະບະ, ລົດຕູ້, ລົດບັສ ແລະ ອື່ນໆ.

- ການນຳເຂົ້າຊົ່ວຄາວພາຫະນະທີ່ມີບ່ອນນັ່ງແຕ່ 30 ບ່ອນນັ່ງລົງມາ. ຕ້ອງນຳເຂົ້າຕາມອາຍຸຂອງສັນຍາທີ່ເຊັນກັບລັດຖະບານ, ແຜນແມ່ບົດຂອງໂຄງການ, ຂະໜາດ

ຂອງທຶນ, ບໍລິມາດວຽກຂອງໂຄງການ, ສັນຍາກັບຂະແໜງທີ່ກ່ຽວຂ້ອງ ໂດຍມີກຳນົດເວລາທີ່ແນ່ນອນ ແລະ ມີຈຳນວນທີ່ແທດເໝາະກັບວຽກງານບໍລິຫານ, ອີງໃສ່ກົດໝາຍແລ້ວ ກຳນົດບໍ່ເກີນ ສອງປີ , ການນຳເຂົ້າຕ້ອງປະບັດຕາມລະບຽບການ ດັ່ງລຸ່ມນີ້:

- ➢ ພາຍຫລັງພາຫະນະ ເຂົ້າມາຮອດດ່ານພາສີຊາຍແດນ ຫລື ສາງ, ຜູ້ນຳເຂົ້າຕ້ອງປະກອບໃບແຈ້ງພາສີເປັນລາຍລະອຽດ ຕາມລະບອບນຳເຂົ້າຊົ່ວຄາວ ພ້ອມທັງຄັດຕິດສັນຍາຄ້ຳປະກັນ ແລະ ເອກະສານອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງຢ່າງຄົບຖ້ວນມາຜ່ານການກວດກາຄວາມຖືກຕ້ອງ ຢູ່ພະແນກຄຸ້ມຄອງການສົ່ງອອກ-ນຳເຂົ້າ ແລະ ອະນຸຍາດ (ວີຊາເຂົ້າ) ຈາກກົມພາສີ ແລະ ຖອກເງິນຄ່າເສຍພາສີ ແລະ ພ້ອມທັງພັນທະອື່ນໆ ຢ່າງຄົບຖ້ວນເຂົ້າບັນຊີເງິນຝາກຂອງກົມພາສີ ຢູ່ທະນາຄານ, ຫລັງຈາກນັ້ນ ຈຶ່ງໄປແຈ້ງພາສີເປັນລາຍລະອຽດຢູ່ດ່ານນຳເຂົ້າ ເພື່ອນຳເອົາພາຫະນະດັ່ງກ່າວ ໄປນຳໃຊ້ຕາມເປົ້າໝາຍພາຍໃນ ກຳນົດເວລາຕາມອາຍຸຂອງສັນຍາຄ້ຳປະກັນ ຫລື ອາຍຸຂອງໂຄງການ ແຕ່ສູງສຸດບໍ່ເກີນສອງປີ ນັບແຕ່ວັນທີ່ ແຈ້ງພາສີເປັນລາຍລະອຽດ (ວັນທີ່ບັນທຶກໃບແຈ້ງພາສີເປັນລາຍລະອຽດເຂົ້າປຶ້ມຕິດຕາມການແຈ້ງພາສີ) ເປັນຕົ້ນໄປ.

<u>ມາດຕາ</u> 5.

5.1 ພາຍຫລັງໝົດກຳນົດອາຍຸຂອງສັນຍາຄ້ຳປະກັນ ຫລື ພາຍໃນກຳນົດສອງປີ ຫາກສົ່ງອອກຄືນ ຈະຖືກໄລ່ລຽງສົ່ງຄືນເງິນຄ່າພາສີ ແລະ ພັນທະອື່ນໆ ຕາມຈຳນວນທີ່ໄດ້ສົ່ງອອກຄືນຕົວຈິງ ແລະ ຄິດໄລ່ສົ່ງເງິນຄືນຕາມເວລາ ການນຳໃຊ້ຢູ່ພາຍໃນປະເທດຕົວຈິງ, ການໄລ່ລຽງສົ່ງຄືນເງິນຄ່າພາສີ ແລະ ພັນທະອື່ນໆ ແມ່ນປະຕິບັດຕາມລະບຽບການໄລ່ລຽງສົ່ງຄືນ ຊຶ່ງກຳນົດໄວ້ ໃນຕາຕະລາງ (ກ ແລະ ຂ) ຕາມມາດຕາ 13 ຂອງດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19/10/2007 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍພາສີ.

5.2 ກ່ອນສິ້ນສຸດອາຍຸຂອງສັນຍາຄ້ຳປະກັນ.

- ຜູ້ນຳເຂົ້າ ຕ້ອງນຳເອົາພາຫະນະພ້ອມເອກະສານທີ່ກ່ຽວຂ້ອງ ໄປແຈ້ງຕໍ່ດ່ານພາສີບ່ອນນຳເຂົ້າ ຫລື ດ່ານພາສີອື່ນທີ່ໄດ້ຮັບອະນຸຍາດ ເພື່ອແຈ້ງພາສີເປັນລາຍລະອຽດ ແລະ ສົ່ງອອກຄືນພາຫະນະດັ່ງກ່າວ, ພາຍຫລັງທີ່ເຈົ້າໜ້າທີ່ພາສີປະຈຳດ່ານບ່ອນສົ່ງອອກ ໄດ້ບັນທຶກຜົນການກວດກາ ແລະ ຢັ້ງຢືນວ່າພາຫະນະດັ່ງກ່າວ ຖືກສົ່ງອອກຈາກດິນແດນ ສປປ ລາວ ແລ້ວ ຜູ້ນຳເຂົ້າຈຶ່ງນຳເອົາເອກະສານຢັ້ງຢືນດັ່ງກ່າວ ໄປສະເໜີຕໍ່ດ່ານພາສີ ເພື່ອໄລ່ລຽງການສົ່ງຄືນ ເງິນຄ່າພາສີ ແລະ ພັນທະອື່ນໆ ພາຍໃນກຳນົດຊາວເອັດວັນ (ບໍ່ນັບວັນພັກລັດຖະການ).

- ພາຍຫຼັງທີ່ດ່ານພາສີບ່ອນສົ່ງອອກໄດ້ຮັບໃບສະເໜີຂໍຖອນເງິນຄ່າພາສີ ແລະ ພັນທະອື່ນໆ ຈາກຜູ້ນຳເຂົ້າ, ດ່ານພາສີຕ້ອງໄລ່ລຽງຕາມຕາຕະລາງ ກ ຫຼື ຂ ທີ່ໄດ້ກຳນົດ

ໄວ້ໃນມາດຕາ 13 ຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 362/ນຍ, ລົງວັນທີ 19/10/2007, ແລ້ວສະເໜີເປັນລາຍລັກອັກສອນຕາມແບບຟອມຂອງກົມພາສີ ເພື່ອຂໍອະນຸມັດຈ່າຍເງິນສົ່ງຄືນ ແລະ ສັ່ງມອບເຂົ້າງົບປະມານ ຈາກຫົວໜ້າກົມພາສີ ພາຍໃນກຳນົດບໍ່ເກີນເຈັດວັນ ( ບໍ່ນັບວັນພັກລັດຖະການ ).

- ພາຍຫຼັງກົມພາສີໄດ້ຮັບການສະເໜີຂໍອະນຸມັດຈ່າຍເງິນສົ່ງຄືນຄ່າພາສີ ແລະ ພັນທະອື່ນໆ ຈາກດ່ານພາສີ ຕ້ອງສ້າງແຜນສະເໜີຂໍອະນຸມັດຈ່າຍຈາກບັນຊີສະເພາະຢູ່ທະນາຄານ ພາຍໃນກຳນົດຫ້າວັນ ( ບໍ່ນັບວັນພັກລັດຖະການ ).

- ພາຍຫຼັງ ທະນາຄານ ໄດ້ຮັບການສະເໜີຂໍອະນຸມັດຈ່າຍຈາກບັນຊີສະເພາະຂອງກົມພາສີ, ທະນາຄານ ຕ້ອງພິຈາລະນາເບີກຈ່າຍໃຫ້ຜູ້ນຳເຂົ້າ ພາຍໃນກຳນົດຫ້າວັນ ( ບໍ່ນັບວັນພັກລັດຖະການ ).

5.3 ໃນກໍລະນີ ຜູ້ນຳເຂົ້າ ມີຈຸດປະສົງສືບຕໍ່ນຳໃຊ້ພາຫະນະດັ່ງກ່າວຢູ່ ພາຍໃນປະເທດໂດຍການປ່ຽນຈາກລະບອບການນຳເຂົ້າຊົ່ວຄາວ ມາເປັນການນຳເຂົ້າ ຕາມລະບອບຊົມໃຊ້ພາຍໃນ ຜູ້ນຳເຂົ້າຕ້ອງເຮັດໜັງສືສະເໜີຫາກົມພາສີ ແລະ ຂະແໜງການທີ່ກ່ຽວຂ້ອງເພື່ອພິຈາລະນາພາຍໃນກຳນົດ ສາມສິບວັນ ກ່ອນໝົດອາຍຸຂອງສັນຍາຄ້ຳປະກັນ, ຖ້າໄດ້ຮັບການອະນຸຍາດຈາກຂະແໜງການກ່ຽວຂ້ອງ ກົມພາສີຈະອະນຸຍາດໃຫ້ປ່ຽນລະບອບການນຳເຂົ້າ ຫລັງຈາກນັ້ນ ຜູ້ນຳເຂົ້າ ຈຶ່ງໄປແຈ້ງພາສີເປັນລາຍລະອຽດ ເພື່ອປ່ຽນແທນລະບອບການນຳເຂົ້າຊົ່ວຄາວ, ພ້ອມທັງຊຳລະຄ່າພາສີ ແລະ ພັນທະອື່ນໆ ໃຫ້ຄົບຖ້ວນຕາມການຄິດໄລ່ຄ່າພາສີ ແລະ ພັນທະອື່ນໆ ທີ່ໄດ້ແຈ້ງໄວ້ໃນລະບອບການນຳເຂົ້າຊົ່ວຄາວໃນເບື້ອງຕົ້ນ ຢູ່ດ່ານພາສີບ່ອນນຳເຂົ້າ ຫລື ດ່ານພາສີອື່ນໆ ທີ່ໄດ້ຮັບອະນຸຍາດຈາກກົມພາສີ.

5.4 ໃນກໍລະນີຜູ້ນຳເຂົ້າບໍ່ປະຕິບັດຕາມສັນຍາທີ່ໄດ້ເຊັນໄວ້ນຳລັດຖະການພາສີ ໂດຍບໍ່ນຳເອົາພາຫະນະອອກຄືນ ຕາມເວລາທີ່ທາງການກຳນົດໃຫ້ ຫລື ນຳໃຊ້ບໍ່ຖືກເປົ້າໝາຍເຊັ່ນ: ປ່ຽນກຳມະສິດ, ນຳໄປຊວດຈຳ, ແລກປ່ຽນ ຫລື ອື່ນໆໂດຍ ບໍ່ໄດ້ຮັບອະນຸຍາດຈາກກົມພາສີ, ເງິນຄ່າພາສີ ແລະ ພັນທະອື່ນໆ ທີ່ຄ້ຳປະກັນໄວ້ ໃນເວລານຳເຂົ້າຈະບໍ່ຖືກໄລ່ລຽງສົ່ງຄືນ ແລະ ຍັງຕ້ອງຖືກດຳເນີນຄະດີ ຖານລະເມີດລະບຽບນຳເຂົ້າຊົ່ວຄາວພ້ອມທັງຖືກປັບໃໝໜຶ່ງເທົ່າຂອງຄ່າພາສີ ແລະ ພັນທະອື່ນໆ ທີ່ໄດ້ຄ້ຳປະກັນໄວ້ໃນເວລານຳເຂົ້າ ຊຶ່ງລະບຽບການດັ່ງກ່າວ ໄດ້ກຳນົດໄວ້ ໃນມາດຕາ 52 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20/05/2007 ຫລື ມາດຕະການອື່ນໆ ທີ່ລະບຽບກົດໝາຍໄດ້ກຳນົດໄວ້.

<u>ຕົວຢ່າງ</u> : ຜູ້ນຳເຂົ້າ ໄດ້ແຈ້ງພາສີເປັນລາຍລະອຽດ ນຳເຂົ້າລົດກະບະ 4 ປະຕູ 02 ຄັນ ໃນວັນທີ 01/01/2009 ມູນຄ່າຄັນທີໜຶ່ງ 260,000,000 ກີບ (ເປັນລົດໃໝ່ 100%), ຄ່າພາສີ ແລະ ພັນທະອື່ນໆ 156.000.000 ກີບ, ຄັນທີສອງ ມູນຄ່າ

208.000.000 ກີບ (ເປັນລົດໃຊ້ແລ້ວ) ຄ່າພາສີ ແລະ ພັນທະອື່ນໆ 124,800,000 ກີບ. ໃນເມື່ອຄົບກຳນົດຕາມສັນຍາ ຜູ້ນຳເຂົ້າໄດ້ມາແຈ້ງສົ່ງອອກຄືນ ພາຫະນະດັ່ງກ່າວ (ຄັນທີໜຶ່ງ), ສ່ວນຄັນທີສອງໄດ້ຂາຍຢູ່ພາຍໃນປະເທດ ໂດຍບໍ່ແຈ້ງໃຫ້ລັດຖະການພາສີຊາບລ່ວງໜ້າ, ຕໍ່ບັນຫາດັ່ງກ່າວ ຕ້ອງປະຕິບັດ ດັ່ງນີ້:

- ກໍລະນີແຈ້ງອອກຄືນ (ລົດຄັນທີ່ໜຶ່ງ) ຈະຖືກໄລ່ລຽງ ສົ່ງຄືນເງິນຄ່າພາສີ ແລະ ພັນທະອື່ນໆ: 156.000.000 x 70% = 109.200.000 ກີບ.

- ກໍລະນີລັກຂາຍ (ລົດຄັນທີສອງ) ຢູ່ພາຍໃນປະເທດ ຈະບໍ່ຖືກໄລ່ລຽງສົ່ງຄືນເງິນຄ່າພາສີ ແລະ ພັນທະອື່ນໆ. ຈະຖືກປັບໃໝ 1 ເທົ່າ ຂອງຄ່າພາສີ ແລະ ພັນທະອື່ນໆ ຕາມການແຈ້ງພາສີເປັນລາຍລະອຽດໃນການນຳເຂົ້າເບື້ອງຕົ້ນ ໃນຖານລະເມີດສັນຍາຄ້ຳປະກັນການນຳເຂົ້າຊົ່ວຄາວ: 124.800.000 x 1 ເທົ່າ = 124.800.000 ກີບ (ຕ້ອງມອບເຂົ້າງົບປະມານຕາມລະບຽບ).

**<u>ມາດຕາ</u> 6. ການຈັດຕັ້ງປະຕິບັດ.**

ມອບໃຫ້ບັນດາພະແນກອ້ອມຂ້າງກົມພາສີ, ພາສີປະຈຳເຂດ, ດ່ານພາສີຊາຍແດນ ໃນທົ່ວປະເທດ ເອົາໃຈໃສ່ປະຕິບັດຢ່າງເຂັ້ມງວດ, ບັນດາທະນາຄານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ, ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງຜັນຂະຫຍາຍ, ບົດແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ.

**<u>ມາດຕາ</u> 7. ຜົນສັກສິດ**

ບົດແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 01 ມິຖຸນາ 2009 ເປັນຕົ້ນໄປ, ທຸກຄຳແນະນຳ ແລະ ລະບຽບການ ທີ່ຂັດກັບບົດແນະນຳສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ຫົວໜ້າກົມພາສີ**

ສົມດີພາບ ພົມວິຫານ